ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ
ຖະໜົນ ເລກ 7, ບ້ານ ໂພນສະຫວັນກາງ, ເມືອງ ແປກ, ແຂວງ ຊຽງຂວາງ ໂທ: +856-61 260030-31 ແຟັກ: +856-61 260034

# ໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ຈັດພິທີປາຖະກະຖາທວນຄືນປະຫວັດຄວາມເປັນມາຂອງວັນແມ່ຍິງລາວ ຄົບຮອບ 66 ປີ




ໃນຕອນເຊົ້າຂອງ ວັນທີ **28** ກໍລະກົດ **2021** ໜ່ວຍສະຫະພັນແມ່ຍິງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ (ທຫລ.ຊຂ) ໄດ້ຈັດພິທີປາຖະກະຖາ ທວນຄືນປະຫວັດຄວາມເປັນມາຂອງວັນແມ່ຍິງລາວ ຄົບຮອບ **66** ປີ **(20/07/1955 – 20/07/2021)** ຂຶ້ນທີ່ຫ້ອງປະຊຸມ ຊັ້ນ V ຂອງ ທຫລ.ຊຂ ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ວິສອນ ໄຊສີງຄາມ ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ, ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ທັງເປັນຜູ້ຊີ້ນໍາວຽກງານສາມອົງການຈັດຕັ້ງມະຫາຊົນ, ມີຄະນະສາຂາ, ຄະນະພະແນກ, ຕາງໜ້າໜ່ວຍກໍາມະບານ ແລະ ໜ່ວຍຊາວໜຸ່ມ, ສະມາຊິກແມ່ຍິງ ເຂົ້າຮ່ວມຢ່າງພ້ອມພຽງ.

ໃນພິທີ ສະຫາຍ ນາງ ພອນທິບ ເພັງໂສພາ ຄະນະກວດກາໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ກໍ່ໄດ້ຂຶ້ນຜ່ານບົດສະຫຼຸບຜົນການເຄື່ອນໄຫວວຽກງານຂອງໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ໃນໄລຍະ 01 ປີ ຜ່ານມາ ແລະ ທິດທາງແຜນການໃນຕໍ່ໜ້າ.

ຫຼັງຈາກນັ້ນ, ສະຫາຍ ນາງ ໜອມ ຫຼວງວິໄລ ຄະນະພັກຮາກຖານ, ຮອງເລຂາໜ່ວຍພັກ, ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ, ປະທານໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ໄດ້ເລົ່າປະຫວັດມູນເຊື້ອປະຫວັດຄວາມເປັນມາຂອງວັນແມ່ຍິງລາວ, ນະໂຍບາຍ ແລະ ກົນໄກສົ່ງເສີມຄວາມກ້າວໜ້າຂອງແມ່ຍິງໃນ ສປປ ລາວ, ວຽກງານພົວພັນ ແລະ ຮ່ວມມືກັບຕ່າງປະເທດ ແລະ ບັນດາອົງການຈັດຕັ້ງ, ຖະແຫຼງການ ແລະ ກອງປະຊຸມຕ່າງໆ ກ່ຽວກັບແມ່ຍິງລາວ, ພ້ອມທັງໄດ້ເລົ່າເຖິງຜົນງານໂດດເດັ່ນປະກອບສ່ວນເຂົ້າໃນພາລະກິດປົດປ່ອຍຊາດຂອງແມ່ຍິງລາວໃນເມື່ອກ່ອນກໍ່ຄືພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃນປັດຈຸບັນ ໃຫ້ມີຄວາມຈະເລີນກ້າວໜ້າຂຶ້ນເປັນກ້າວໆ.

ພ້ອມດຽວກັນນີ້, ສະຫາຍ ນາງ ພອນທິບ ເພັງໂສພາ ຄະນະກວດກາໜ່ວຍສະຫະພັນແມ່ຍິງ ສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ໄດ້ຂຶ້ນຜ່ານຂໍ້ຕົກລົງ ສະບັບເລກທີ 128/ສຍຂ, ລົງວັນທີ 04 ມີນາ 2020 ວ່າດ້ວຍການມອບໃບຍັ້ງຢືນ 03 ດີ ໃຫ້ໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ ເຊິ່ງໃຫ້ກຽດຂຶ້ນມອບໂດຍສະຫາຍ ວິສອນ ໄຊສົງຄາມ ເລຂາຄະນະພັກຮາກຖານ, ເລຂາໜ່ວຍພັກ, ຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ ແລະ ຂຶ້ນຮັບເອົາໂດຍແມ່ນສະຫາຍ ນາງ ໜອມ ຫຼວງວິໄລ ຄະນະພັກຮາກຖານ, ຮອງເລຂາໜ່ວຍພັກ, ຮອງຫົວໜ້າສາຂາທະນາຄານແຫ່ງ ສປປ ລາວ ພາກເໜືອ ແຂວງຊຽງຂວາງ, ປະທານໜ່ວຍສະຫະພັນແມ່ຍິງ ທຫລ.ຊຂ.

ໃນຕອນທ້າຍສະຫາຍ ປະທານ ຍັງໄດ້ເນັ້ນໜັກແຕ່ລະຈຸດທີ່ສຳຄັນກ່ຽວກັບ ການເຄື່ອນໄຫວວຽກງານຂອງໜ່ວຍສະຫະພັນແມ່ຍິງໃນໄລຍະຜ່ານມາ ໂດຍໄດ້ຍົກໃຫ້ເຫັນຢ່າງຊັດເຈນຂອງບັນຫາ ແລະ ຜົນງານທີ່ຍາດມາໄດ້, ພ້ອມທັງຫາສາເຫດຂອງຜົນສຳເລັດເຫຼົ່ານັ້ນ ເຊິ່ງທັງໝົດນັ້ນໄດ້ປະກອບສ່ວນເປັນອັນສຳຄັນໃຫ້ແກ່ຜົນສຳເລັດຂອງວຽກງານ ທຫລ.ຊຂ ໃນໄລຍະຜ່ານມາ. ນອກນີ້, ຍັງຕ້ອງໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງແນວຄິດ ໃຫ້ສະມາຊິກແມ່ຍິງທີ່ຢູ່ໃນຄວາມຮັບຜິດຊອບຂອງຕົນຫຼາກຫຼາຍຮູບການທີ່ມີເນື້ອໃນເລິກເຊິ່ງແນ່ໃສ່ສ້າງໃຫ້ສະມາຊິກແມ່ຍິງມີຄວາມເຂົ້າໃຈ ແລະ ກຳແໜ້ນການຊີ້ນຳ-ນຳພາຂອງພັກ-ລັດ. ພ້ອມກັນນັ້ນ, ກໍ່ເຊີດຊູສະຕິຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານ, ເພີ່ມຄວາມເປັນເຈົ້າການ, ຍົກສູງການຈັດຕັ້ງປະຕິບັດວຽກງານວິຊາສະເພາະ ຕາມພາລະບົດບາດຂອງຕົນກໍ່ຄືການຈັດຕັ້ງປະຕິບັດຂໍ້ແຂ່ງຂັນ 03 ດີ ຕາມຄຳຂວັນແມ່ຍິງລາວ ຕັ້ງຫນ້າສ້າງບາດກ້າວບຸກທະລຸທັງ 4 ດ້ານ ໃຫ້ປະກົດຜົນເປັນຈິງ.

**✍ຂ່າວ: ສຸກສະຫວັນ ພົມມະວົງ**